## ການວ່າຈ້າງ CASp

ເພື່ອທີ່ຈະຊອກຫາ CASp, ກະລຸນາໄປທີ່ເວັບໄຊຂອງ DSA ທີ່ www.dgs.ca.gov/DSA/Resources/CASp-Property-Inspection ແລ້ວຄລິກລິ້ງລາຍຊື່ຜູ້ຊ່ຽວຊານດ້ານການເຂົ້າເຖິງທີ່ມີການຢັ້ງຢືນ. CASp ທີ່ລະບຸວ່າ "Yes (ມີ)" ໃນຖັນ "Do Inspections (ເຮັດການກວດກາ)" ແມ່ນພ້ອມໃຫ້ບໍລິການ.

## ສິ່ງທີ່ຄວນບັນທຶກໄວ້ພາຍຫຼັງການກວດກາ

1. **ເກັບລາຍງານການກວດກາໂດຍ CASp ໃນບັນທຶກເອກະສານຂອງທ່ານ.**
   ລາຍງານແມ່ນເປັນຄວາມລັບ ແລະ ຄວນແບ່ງປັນພາຍໃຕ້ການແນະນຳໂດຍທີ່ປຶກສາທາງກົດໝາຍ ຫຼື ຕາມທີ່ກົດໝາຍກຳນົດ. ຢ່າງໃດກໍຕາມ, ທ່ານສາມາດແບ່ງປັນລາຍງານສະບັບນີ້ກັບຜູ້ຊ່ຽວຊານດ້ານການກໍ່ສ້າງທີ່ທ່ານໄດ້ວ່າຈ້າງ ເພື່ອໃຫ້ສອດຄ່ອງກັບລະບຽບການ.

2. **ການປະຕິບັດຕາມກຳນົດການປັບປຸງຂອງທ່ານ.**
   ສິ່ງນີ້ມີຄວາມສຳຄັນເນື່ອງຈາກມັນສະແດງໃຫ້ເຫັນເຖິງເຈດຕະນາຂອງທ່ານ ທີ່ຈະປະຕິບັດຕາມກົດໝາຍ ແລະ ມີຄວາມສອດຄ່ອງກັບລະບຽບການ.

3. **ຮັກສາຄຸນສົມບັດໃນການເຂົ້າເຖິງສະຖານທີ່ໃຫ້ບໍລິການຂອງທ່ານ.**
   ສ້າງແຜນການເພື່ອໃຫ້ມີຄວາມສອດຄ່ອງກັບລະບຽບການ. ສອບຖາມ CASp ຂອງທ່ານກ່ຽວກັບມາດຕະຖານການເຂົ້າເຖິງ ທີ່ກ່ຽວຂ້ອງກັບການກໍ່ສ້າງທີ່ຈຳເປັນຕ້ອງມີການບຳລຸງຮັກສາ ແລະ ສ້າງນະໂຍບາຍເພື່ອກວດກາລາຍການທີ່ຕ້ອງບຳລຸງຮັກສາເປັນປະຈຳ. ກວດສອບນະໂຍບາຍດ້ານການປະຕິບັດງານທີ່ອາດມີຜົນກະທົບຕໍ່ຄວາມສອດຄ່ອງກັບລະບຽບການເປັນໄລຍະ ແລະ ສ້າງຂະບວນການເພື່ອຮັບປະກັນວ່າມີການສະໜອງການເຂົ້າເຖິງ. ແຈ້ງພະນັກງານຂອງທ່ານກ່ຽວກັບການບຳລຸງຮັກສາ ແລະ ນະໂຍບາຍດ້ານການປະຕິບັດການທີ່ມີຜົນກະທົບຕໍ່ການເຂົ້າເຖິງສະຖານທີ່ໃຫ້ບໍລິການຂອງທ່ານ.

4. **ຜົນປະໂຫຍດທາງກົດໝາຍຂອງທ່ານຈະບໍ່ "ໝົດອາຍຸ".**
   ເມື່ອ CASp ໄດ້ກວດກາສະຖານທີ່ໃຫ້ບໍລິການຂອງທ່ານ, ບໍ່ມີເຫດຜົນທີ່ຈະຕ້ອງເຮັດການກວດກາຊ້ຳ ນອກຈາກວ່າທ່ານໄດ້ເຮັດການປັບປຸງ ຫຼື ດັດແປງສະຖານທີ່ໃຫ້ບໍລິການຂອງທ່ານ. ຖ້າທ່ານບໍ່ໄດ້ເຮັດການປັບປຸງສະຖານທີ່ໃຫ້ບໍລິການຂອງທ່ານທີ່ຈຳເປັນຕ້ອງມີການອະນຸຍາດ, ໃຫ້ສອບຖາມພະແນກທີ່ຮັບຜິດຊອບຕຶກອາຄານໃນທ້ອງຖິ່ນເພື່ອທີ່ຈະດຳເນີນການກວດກາຂັ້ນຕອນສຸດທ້າຍໂດຍພະນັກງານ CASp ຂອງພາກສ່ວນດັ່ງກ່າວ ເພື່ອທີ່ຈະໃຫ້ຜົນປະໂຫຍດທາງກົດໝາຍຂອງທ່ານສຳລັບພື້ນທີ່ທີ່ໄດ້ກວດກາຍັງຄົງມີຜົນນຳໃຊ້.




# ການວ່າຈ້າງ CASp

ສຳລັບເຈົ້າຂອງທຸລະກິດ ແລະ ເຈົ້າຂອງອະສັງຫາລິມະຊັບ ເພື່ອຮັບປະກັນວ່າບຸກຄົນທີ່ມີຄວາມພິການສາມາດເຂົ້າເຖິງສະຖານທີ່ໃຫ້ບໍລິການຂອງເຂົາເຈົ້າ

www.dgs.ca.gov/DSA/Resources/CASp-Property-Inspection

DSA
DIVISION OF THE STATE ARCHITECT
DEPARTMENT OF GENERAL SERVICES

# ສໍາລັບເຈົ້າຂອງທຸລະກິດ ແລະ ເຈົ້າຂອງອະສັງຫາລິມະຊັບ ເພື່ອຮັບປະກັນວ່າ ບຸກຄົນທີ່ມີຄວາມພິການສາມາດເຂົ້າເຖິງສະຖານທີ່ໃຫ້ບໍລິການຂອງເຂົາເຈົ້າ

## ສິ່ງທີ່ຄວນຮູ້ກ່ຽວກັບການກວດກາໂດຍ CASp

*ຜູ້ຊ່ຽວຊານດ້ານການເຂົ້າເຖິງທີ່ມີການຢັ້ງຢືນ (CASp) ໄດ້ຮັບການທົດສອບຄວາມຮູ້ຂອງເຂົາເຈົ້າ ກ່ຽວກັບມາດຕະຖານການເຂົ້າເຖິງຂອງລັດ ແລະ ລັດຖະບານກາງແລ້ວ. ເມື່ອມີການກວດກາ ແລະ ລາຍງານ CASp, ນອກຈາກການສຶກສາສະຖານະພາບການເຂົ້າເຖິງຂອງສະຖານທີ່ໃຫ້ບໍລິການຂອງທ່ານ, ທ່ານສາມາດຮັບຜົນປະໂຫຍດທາງກົດໝາຍນໍາ.*

### ຜົນປະໂຫຍດທາງກົດໝາຍ

- ສະເໜີຂໍປະຊຸມປະເມີນຜົນແຕ່ຫົວທີ.
- ຮັບສິດຢຸດການດໍາເນີນຄະດີໃນສານຊົ່ວຄາວ *90* ມື້.
- ຫຼຸດຄ່າເສຍຫາຍຕາມກົດໝາຍຂັ້ນຕ່ໍາທີ່ *$1,000* ຈາກ *$4,000,* ຖ້າມີການພົບວ່າ ທ່ານໄດ້ລະເມີດຂໍ້ກໍານົດວ່າດ້ວຍການເຂົ້າເຖິງທີ່ກ່ຽວຂ້ອງກັບການກໍ່ສ້າງ ແລະ ມີການແກ້ໄຂການລະເມີດພາຍໃນ *60*ມື້.
- ຜົນປະໂຫຍດເພີ່ມເຕີມສໍາລັບທຸລະກິດຂະໜາດນ້ອຍທີ່ມີຄຸນສົມບັດ.

*ສະຖານທີ່ໃຫ້ບໍລິການທີ່ໄດ້ຮັບການກວດກາບໍ່ຈໍາເປັນຕ້ອງປະຕິບັດຕາມມາດຕະຖານການເຂົ້າເຖິງທີ່ກ່ຽວຂ້ອງກັບການກໍ່ສ້າງທີ່ມີຜົນບັງຄັບໃຊ້ທັງໝົດ ເພື່ອທີ່ຈະໃຫ້ທ່ານຮັບຜົນປະໂຫຍດທາງກົດໝາຍ ແຕ່ຕ້ອງມີການກວດກາອະສັງຫາລິມະຊັບໂດຍ CASp ກ່ອນທີ່ຈະຍື່ນຄໍາຮ້ອງຮຽນ. ການມີຄວາມຄືບໜ້າໃນການແກ້ໄຂການລະເມີດຕາມກໍານົດການປັບປຸງຂອງທ່ານຈະຫຼຸດ ຫຼື ລຶບລ້າງຄວາມຮັບຜິດຊອບຂອງທ່ານ.*

## ສິ່ງທີ່ທ່ານຈະໄດ້ຮັບຈາກ CASp ຂອງທ່ານ

### ຂໍ້ຕົກລົງທີ່ເປັນລາຍລັກອັກສອນສໍາລັບການບໍລິການ

*ເພື່ອຮັບຜົນປະໂຫຍດທາງກົດໝາຍ ຂໍ້ຕົກລົງຄວນລະບຸວ່າ CASp ຈະດໍາເນີນການກວດກາໃຫ້ທ່ານ ແລະ ມີລາຍງານຕາມກົດໝາຍວ່າດ້ວຍການປະຕິບັດຕາມມາດຕະຖານການເຂົ້າເຖິງທີ່ກ່ຽວຂ້ອງກັບການກໍ່ສ້າງ (Construction-Related Accessibility Standards Compliance Act, CRASCA) ໃນມາດຕາ 55.53 ຂອງປະມວນກົດໝາຍແພ່ງ.*

### ລາຍງານການກວດກາ

*ເອກະສານສະບັບນີ້ຈະມີລາຍລະອຽດກ່ຽວກັບພື້ນທີ່ທີ່ໄດ້ຮັບການກວດກາ, ວັນທີຂອງການກວດກາ ແລະ ການກໍານົດສະຖານະຄວາມສອດຄ່ອງກັບລະບຽບການຂອງທ່ານ:*

#### *ບັນລຸມາດຕະຖານທີ່ມີຜົນບັງຄັບໃຊ້*

*ລາຍງານການກວດກາທີ່ມີການລົງລາຍເຊັນ ແລະ ລົງວັນທີ ທີ່ລະບຸວ່າ ພື້ນທີ່ທີ່ໄດ້ຮັບການກວດກາໄດ້ຜ່ານຂໍ້ກໍານົດດ້ານການເຂົ້າເຖິງທີ່ກ່ຽວຂ້ອງກັບການກໍ່ສ້າງ ຕາມຄວາມເຫັນຂອງ CASp.*

#### *ກວດກາໂດຍ CASp*

*ໝາຍເຫດກ່ຽວກັບພື້ນທີ່ໃດໜຶ່ງທີ່ຈໍາເປັນຕ້ອງແກ້ໄຂ ແລະ ການແກ້ໄຂທີ່ຈໍາເປັນ. CASp ອາດຈະເຮັດວຽກກັບທ່ານ ເພື່ອສ້າງກໍານົດການສໍາເລັດວຽກງານທີ່ເໝາະສົມສໍາລັບວຽກງານແກ້ໄຂແຕ່ລະລາຍການ.*

### ໃບຢັ້ງຢືນການກວດກາການເຂົ້າເຖິງສໍາລັບຄົນພິການ

*ໃບຢັ້ງຢືນການກວດກາການເຂົ້າເຖິງສໍາລັບຄົນພິການທີ່ມອບໃຫ້ໂດຍ CASp ແມ່ນສາມາດວາງສະແດງຢູ່ໃນສະຖານທີ່ໃຫ້ບໍລິການໄດ້. ພວກເຮົາຂໍແນະນໍາໃຫ້ວາງສະແດງສໍາເນົາສີ ແລະ ເກັບຮັກສາຕົ້ນສະບັບໄວ້ໃນບ່ອນທີ່ປອດໄພ.*

## ສິ່ງທີ່ CASp ຈະສອບຖາມທ່ານ

1. ວັນທີກໍ່ສ້າງ: ______________________________

2. ນຶທີ່ ແລະ ວັນທີຂອງການປັບປຸງ/ການບູລະນະທີ່ຜ່ານມາ: ______________

______________________________________________

______________________________________________

______________________________________________

______________________________________________

______________________________________________

3. ນຶທີ່ທີ່ມີໃຫ້ສາທາລະນະ (ລູກຄ້າ) ນໍາໃຊ້ (ລູກຄ້າ):

☐ ພື້ນທີ່ສໍາລັບການຂາຍເຄື່ອງຍ່ອຍ/ກິນອາຫານ/ພົບປະກັນ

☐ ບ່ອນຈອດລົດ

☐ ຫ້ອງນໍ້າ

☐ ອື່ນໆ: ______________________________

*ຖ້າທ່ານບໍ່ແນ່ໃຈກັບຄໍາຕອບ, CASp ຂອງທ່ານສາມາດເຮັດການຄົ້ນຄວ້າ ຫຼື ໃຫ້ຄໍາແນະນໍາແກ່ທ່ານໃນການຊອກຫາຂໍ້ມູນ.*